ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ

ເລກທີ 05 /ສພຂ.ຊຍ
ໄຊຍະບູລີ, ວັນທີ 16 ກຸມພາ 2023

# ມະຕິ
# ຂອງກອງປະຊຸມສະພາປະຊາຊົນແຂວງ
# ວ່າດ້ວຍ ການຮັບຮອງເອົາບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບ ການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປີ 2021, ການປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023

- ອີງຕາມ ລັດຖະທຳມະນູນແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 77 ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ.
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020, ມາດຕາ 12 ຂໍ້ 2.1 ແລະ ມາດຕາ 59 ຂໍ້ 1.
- ອີງຕາມ ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023.

ຜ່ານການຄົ້ນຄວ້າ, ປະກອບຄຳເຫັນ ແລະ ພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຕໍ່ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2021 ແລະ ການຈັດຕັ້ງແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023, ໃນວາລະກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II.

**ກອງປະຊຸມຕົກລົງ:**

**ມາດຕາ 1 ຮັບຮອງເອົາ ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບ ການສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2021.**

ກອງປະຊຸມສະພາປະຊາຊົນແຂວງ ສະແດງຄວາມຊົມເຊີຍ ອົງການປົກຄອງແຂວງ ທີ່ໄດ້ເອົາໃຈໃສ່ຊີ້ນຳໃນການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດຂອງແຂວງ ຢ່າງຕັ້ງໜ້າ ແລະ ເຫັນດີຕໍ່ການສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2021 ດັ່ງນີ້:

**1. ດ້ານລາຍຮັບ:** ປະຕິບັດໄດ້ 287,60 ຕື້ກີບ, ເທົ່າກັບ 97,85% ຂອງແຜນການປີ;

**2. ດ້ານລາຍຈ່າຍ:** ປະຕິບັດໄດ້ 546,51 ຕື້ກີບ, ເທົ່າກັບ 99,49% ຂອງແຜນການປີ;



Scanned with CamScanner

**3. ດ້ານການດຸ່ນດ່ຽງງົບປະມານ**: ປະຕິບັດໄດ້ 266,44 ຕື້ກີບ, ເທົ່າກັບ 118,35 % ຂອງແຜນການປີ.

**ມາດຕາ 2 ຮັບຮອງເອົາ ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈໍາປີ 2022.**

ກອງປະຊຸມ ສະພາປະຊາຊົນແຂວງ ເຫັນດີເປັນເອກະພາບ ຕໍ່ບົດລາຍງານຂອງອົງການປົກຄອງແຂວງ ແລະສະແດງຄວາມຊົມເຊີຍ ອົງການປົກຄອງແຂວງ ທີ່ເອົາໃຈໃສ່ຊີ້ນໍາ-ນໍາພາການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈໍາປີ 2022 ຢ່າງຕັ້ງໜ້າ ແລະ ມີຜົນສໍາເລັດຫຼາຍດ້ານ ໂດຍສະເພາະການເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍ ສາມາດປະຕິບັດໄດ້ດັ່ງນີ້:

1. **ດ້ານລາຍຮັບ: ສາມາດປະຕິບັດລາຍຮັບໄດ້ທັງໝົດ:** 1.197,84 ຕື້ກີບ ເທົ່າກັບ 106,43% ຂອງແຜນການປີ, ໃນນີ້:
   - ລາຍຮັບພູດສູນກາງປະຕິບັດໄດ້: 920,34 ຕື້ກີບ, ເທົ່າກັບ 103,30% ຂອງແຜນການປີ;
   - ລາຍຮັບພາຍໃນປະຕິບັດໄດ້: 277,50 ຕື້ກີບ, ເທົ່າກັບ 113,95% ຂອງແຜນການປີ;
2. **ດ້ານລາຍຈ່າຍ: ປະຕິບັດໄດ້** 536,49 ຕື້ກີບ, ເທົ່າກັບ 113,44% ຂອງແຜນການປີ;
3. **ດ້ານການດຸ່ນດ່ຽງງົບປະມານ: ປະຕິບັດໄດ້:** 293,64 ຕື້ກີບ, ເທົ່າກັບ 123,17% ຂອງແຜນການປີ.

**ມາດຕາ 3 ຮັບຮອງເອົາແຜນງົບປະມານແຫ່ງລັດຂອງແຂວງ ປະຈໍາປີ 2023**

ກອງປະຊຸມຮັບຮອງເອົາແຜນງົບປະມານແຫ່ງລັດຂອງແຂວງ ປະຈໍາປີ **2023** ຕາມການສະເໜີຂອງອົງການປົກຄອງແຂວງ ດັ່ງນີ້:

| | | |
|---|---|---|
| **1. ລາຍຮັບທັງໝົດ** | | **1.514,74 ຕື້ກີບ, ໃນນີ້:** |
| **- ລາຍຮັບພູດສູນກາງ** | | 1.010,00 ຕື້ກີບ; |
| **- ລາຍຮັບພູດທ້ອງຖິ່ນ** | | 504,74 ຕື້ກີບ; |
| + ລາຍຮັບຂອງແຂວງປົກກະຕິ | | 232,51 ຕື້ກີບ; |
| + ລາຍຮັບທີ່ສູນກາງມອບໃຫ້ແຂວງ | | 272,22 ຕື້ກີບ. |
| **2. ລາຍຈ່າຍທັງໝົດ** | | **520,11 ຕື້ກີບ ໃນນີ້:** |
| - ເງິນເດືອນ+ເງິນນະໂຍບາຍ | (ພາກ 60+61) | 432,44 ຕື້ກີບ; |
| - ບໍລິຫານລັດ | (ພາກ 62) | 49,71 ຕື້ກີບ; |
| - ສິ່ງເສີມ-ດັດສົມ | (ພາກ 63) | 14,20 ຕື້ກີບ; |
| - ແຮບັງເອີນອື່ນໆ | (ພາກ 65) | 2,50 ຕື້ກີບ; |
| - ຊື້ຊັບສົມບັດຄົງທີ່ | (ພາກ 66) | 0 ຕື້ກີບ; |
| - ການລົງທຶນ | (ພາກ 67) | 21,26 ຕື້ກີບ. |

3. **ດຸ່ນດ່ຽງງົບປະມານ:** ຂາດດຸນງົບປະມານ 15,37 ຕື້ກີບ.
4. **ສຸມໃສ່ຈັດຕັ້ງປະຕິບັດ 7 ໜ້າວຽກຈຸດສຸມທີ່ໄດ້ກໍານົດໄວ້ໃນແຜນຈັດຕັ້ງປະຕິບັດ ວາລະແຫ່ງຊາດຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.**

**ມາດຕາ 4 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈໍາປີ 2023.**

ກອງປະຊຸມເຫັນດີເປັນເອກະພາບຮັບຮອງເອົາ ບັນດາມາດຕະການໃນແຕ່ລະດ້ານຂອງແຜນງົບປະມານແຫ່ງລັດຂອງແຂວງ ຕາມການສະເໜີຂອງອົງການປົກຄອງແຂວງ, ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈໍາປີ 2023 ບັນລຸຕາມແຜນການທີ່ວາງໄວ້, ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງ ເອົາໃຈໃສ່ຈັດຕັ້ງປະຕິບັດມາດຕະການເພີ່ມເຕີມດັ່ງນີ້:



ສະແກນດ້ວຍ CamScanner

**1. ດ້ານລາຍຮັບ**

1.1 ໃຫ້ບັນດາຫົວໜ່ວຍງົບປະມານ ເປັນເຈົ້າການກວດຄືນ ແລະ ມອບລາຍຮັບຈາກການກວດສອບກວດເຫັນເພີ່ມ ປີ 2021 ຈຳນວນ 1.207,19 ລ້ານ ເພື່ອເອົາເຂົ້າແຜນງົບປະມານຂອງແຂວງ ປີ 2023;

1.2 ສືບຕໍ່ຫັນເປັນທັນສະໄໝຢ່າງແຂງແຮງ ແລະ ກ້ວາງຂວາງ ໃນການຈັດເກັບລາຍຮັບ ຜ່ານລະບົບທະນາຄານ ໂດຍສະເພາະລາຍຮັບພາສີ, ອາກອນ ແລະ ຄ່າບໍລິການ ໂດຍຜ່ານລະບົບ TaxRis ໄປສູ່ບັນດາເມືອງໃນທົ່ວແຂວງ, ພ້ອມດຽວກັນນັ້ນຈະຕ້ອງໄດ້ເອົາໃຈໃສ່ໂຄສະນາ, ເຜີຍແຜ່, ແນະນຳໃຫ້ຜູ້ປະກອບການ, ປະຊາຊົນໃຫ້ມີຄວາມເຂົ້າໃຈ ແລະ ເຂົ້າເຖິງການບໍລິການເສຍພາສີ-ອາກອນ ແລະ ຄ່າທຳນຽມອື່ນໆ. ຊີ້ແຈງ, ອະທິບາຍ ແລະ ຊ່ວຍແກ້ໄຂບັນຫາ ໃຫ້ຜູ້ປະກອບການ ໃນການປະຕິບັດພັນທະພາສີ-ອາກອນໃຫ້ຖືກຕ້ອງຕາມຄົບຖ້ວນຕາມກົດໝາຍ;

1.3 ມອບໃຫ້ພະແນກການເງິນແຂວງ ປະສານສົມທົບກັບຄະນະສະເພາະກິດຂັ້ນແຂວງ, ອົງການກວດກາລັດແຂວງ, ອົງການກວດສອບປະຈຳພາກເໜືອ ແລະ ຂະແໜງການການທີ່ກ່ຽວຂ້ອງ ສືບຕໍ່ເລັ່ງທວງ ແລະ ເກັບຄືນ ລາຍຮັບທີ່ຄ້າງມອບເຂົ້າງົບປະມານ ແລະ ເກັບກູ້ຄືນລາຍຮັບທີ່ກວດເຫັນເພີ່ມ ນັບແຕ່ ສົກປີ 2015-2016 ຫາປີ 2021 ຈາກການກວດສອບ-ກວດກາ ຕາມມະຕິຂອງສະພາປະຊາຊົນແຂວງ ໃຫ້ຄົບຖ້ວນ ແລະ ຖືກຕ້ອງຕາມກົດໝາຍ;

1.4 ເພີ່ມທະວີການຄຸ້ມຄອງ ແລະ ກວດກາ ຢ່າງເຂັ້ມງວດ ກ່ຽວກັບການນຳເຂົ້າສິນຄ້າທີ່ບໍ່ຖືກຕ້ອງ ຢູ່ຕາມດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີ;

1.5 ໃຫ້ພະແນກການເງິນເປັນເຈົ້າການ ໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຮ່ວມກັນສືບຕໍ່ສຳຫຼວດຂໍ້ມູນຖານລາຍຮັບຄືນໃໝ່ ໃຫ້ມີຄວາມຈັດເຈນ ແລະ ຖືກຕ້ອງຄົບຖ້ວນ ເພື່ອເປັນຂໍ້ມູນໃນການຈັດເກັບລາຍຮັບໃຫ້ຄົບຖ້ວນ.

**2. ດ້ານລາຍຈ່າຍ**

2.1 ໃຫ້ບັນດາຫົວໜ່ວຍງົບປະມານ ເປັນເຈົ້າການກວດຄືນລາຍຈ່າຍຈາກການກວດສອບກວດເຫັນເພີ່ມ ປີ 2021 ຈຳນວນ 63,33 ລ້ານກີບ ເພື່ອເອົາເຂົ້າແຜນງົບປະມານຂອງແຂວງ ປີ 2023;

2.2 ເອົາໃຈໃສ່ຈັດຕັ້ງປະຕິບັດ ແຜນງົບປະມານໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມກົດໝາຍ, ປະຢັດມັດທະຍັດ, ມີປະສິດທິພາບ, ປະສິດທິຜົນ ແລະ ຫຼຸດຜ່ອນລາຍຈ່າຍທີ່ບໍ່ຈຳເປັນ;

2.3 ການນຳໃຊ້ງົບປະມານລັດເງິນ ໃນການຈັດຊື້ ການກໍ່ ສ້າງ-ສ້ອມແປງ ຕ້ອງໄດ້ມີການປະເມີນຕາມກົດໝາຍວ່າດ້ວຍການຈັດຊື້ຈັດຈ້າງ;

2.4 ສູ້ຊົນປະຕິບັດນະໂຍບາຍການເງິນ-ງົບປະມານ ໃຫ້ມີຄວາມສອດຄ່ອງ ແລະ ກົມກຽວ ໂດຍຖືເອົາການປະຕິບັດລາຍຈ່າຍເງິນເດືອນເປັນບຸລິມະສິດ, ເອົາໃຈໃສ່ບໍລິຫານ ແລະ ຄຸ້ມຄອງລາຍຈ່າຍໃຫ້ໄດ້ຕາມຄາດໝາຍທີ່ສະພາປະຊາຊົນແຂວງໄດ້ຮັບຮອງ ໃນມະຕິສະບັບນີ້.

**3. ດ້ານການຄຸ້ມຄອງບໍລິຫານ**

3.1 ແຈ້ງຜົນການຈັດແບ່ງງົບປະມານການລົງທຶນຂອງລັດ ປະຈຳປີ 2023; ການແບ່ງງົບປະມານລາຍຮັບ-ລາຍຈ່າຍອ້ອມຂ້າງແຂວງ ແລະ 11 ເມືອງ ປະຈຳປີ 2023 ແລ້ວລາຍງານສະພາປະຊາຊົນແຂວງ ເພື່ອໃຫ້ຄະນະປະຈຳສະພາປະຊາຊົນແຂວງ ມີມະຕິຮັບຮອງ;

3.2 ສືບຕໍ່ປະຕິບັດດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 205/ນຍ, ລົງວັນທີ 22 ກໍລະກົດ 2022 ວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍ;

3.3 ເພີ່ມທະວີວຽກງານຕິດຕາມກວດກາ ການປະຕິບັດແຜນລາຍຮັບ-ລາຍຈ່າຍງົບປະມານ ໃຫ້ໄປຕາມກົດໝາຍ ແລະ ລະບຽບການກຳນົດຢ່າງເຂັ້ມງວດ;





ສະແກນດ້ວຍ CamScanner

3.4 ປັບປຸງກົນໄກ, ຂັ້ນຕອນ, ວິທີການ ໃນການປະສານສົມທົບລະຫວ່າງ ພະແນກການເງິນແຂວງ, ຫ້ອງການການເງິນເມືອງ ກັບສະພາປະຊາຊົນແຂວງ ໃຫ້ເປັນປົກກະຕິ, ມີຄວາມຄ່ອງຕົວ ແລະ ສອດຄ່ອງຕາມສິດໜ້າທີ່ ແລະ ຄວາມຮັບຜິດຊອບ ຕາມກົດໝາຍກ່ຽວຂ້ອງກຳນົດ.

**ມາດຕາ 5 ການຈັດຕັ້ງປະຕິບັດ.**

1. ມອບໃຫ້ອົງການປົກຄອງແຂວງ ຊີ້ນຳບັນດາພະແນກການ, ອົງການລັດທຽບເທົ່າ ແລະ ອົງການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.
2. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ບັນດາຄະນະກຳມະການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ ຢູ່ບັນດາເມືອງ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 6 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັນ ຄຳພັນເພັງ